ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 292 /ລບ
ນະຄອນຫຼວງວຽງຈັນ, ວັນທີ 28 / 05 / 25

# ດຳລັດ
# ວ່າດ້ວຍສິນເຊື່ອກາກບອນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 53/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ມະຕິກອງປະຊຸມລັດຖະບານ ສະບັບເລກທີ 02/ລບ, ລົງວັນທີ 10 ກຸມພາ 2025.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານສິນເຊື່ອກາກບອນ ເພື່ອໃຫ້ວຽກງານດັ່ງກ່າວມີປະສິດທິພາບ, ປະສິດທິຜົນ ແນໃສ່ລະດົມທຶນຈາກ ສາກົນ, ສ້າງຜົນປະໂຫຍດໃຫ້ແກ່ ລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນເຂົ້າໃນການແກ້ໄຂ ບັນຫາການປ່ຽນແປງດິນຟ້າອາກາດ ຮ່ວມກັບປະຊາຄົມໂລກ ແລະ ການພັດທະນາເສດຖະກິດ-ສັງຄົມ ຕາມທິດ ສີຂຽວ ແລະ ຍືນຍົງ.

**ມາດຕາ 2 ສິນເຊື່ອກາກບອນ**

ສິນເຊື່ອກາກບອນ ແມ່ນ ສິດທີ່ເກີດຈາກການດຳເນີນໂຄງການ ຫຼື ກິດຈະການຕ່າງໆ ທີ່ເປັນ ການຫຼຸດຜ່ອນ ປະລິມານການປ່ອຍ, ການດູດຊັບ ແລະ ການເກັບກັກ ທາດອາຍເຮືອນແກ້ວ ຊຶ່ງແຕ່ລະທາດຕ້ອງໄດ້ຄິດໄລ່ເປັນຫົວໜ່ວຍ ທຽບເທົ່າເປັນໂຕນກາກບອນໄດອອກໄຊ ($tCO_{2e}$) ແລະ ສິດດັ່ງກ່າວສາມາດແລກປ່ຽນ ຫຼື ຊື້ ຂາຍ ຢູ່ໃນຕະຫຼາດສິນ ເຊື່ອກາກບອນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ມາດຕະຖານການຫຼຸດຜ່ອນທາດອາຍເຮືອນແກ້ວ** ໝາຍເຖິງ ຄຸນລັກສະນະສະເພາະຂອງການຫຼຸດຜ່ອນທາດອາຍເຮືອນແກ້ວ ແລະ ບັນຫາອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ກົດລະບຽບ, ຂັ້ນຕອນ ແລະ ວິທີຄິດໄລ່ ເພື່ອຕີລາຄາ, ຈັດແບ່ງປະເພດ ແລະ ຈັດລະດັບຄຸນນະພາບຂອງການຫຼຸດຜ່ອນທາດອາຍເຮືອນແກ້ວ ຊຶ່ງເປັນທີ່ຍອມຮັບຂອງສາກົນ;

2. **ທາດອາຍເຮືອນແກ້ວ (Greenhouse gases: GHG)** ໝາຍເຖິງ ກາກບອນໄດອອກໄຊ ($CO_2$), ມີເທນ ($CH_4$), ໄນຕຣັດອອກໄຊ ($N_2O$), ໄຮໂດຣຟຣູໂອໂຣກາກບອນ (HFCs), ເປີຟຣູໂອໂຣກາກບອນ (PFCs), ເຮັກຊາຟຣູອໍໄລ ($SF_6$) ແລະ ໄນໂຕຣເຈັນໄທຣຟຣູໂອອໍໄລ ($NF_3$) ທີ່ຖືກປ່ອຍອອກຈາກທຳມະຊາດ ຫຼື ເກີດຂຶ້ນຈາກການກະທຳຂອງມະນຸດ ຂຶ້ນສູ່ຊັ້ນບັນຍາກາດ ກໍ່ຕົວເປັນຊັ້ນອາຍເຮືອນແກ້ວ ຊຶ່ງເປັນສາເຫດເຮັດໃຫ້ໂລກຮ້ອນ ຫຼື ການປ່ຽນແປງດິນຟ້າອາກາດ ເປັນຕົ້ນ ການເຜົາໄໝ້, ການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້, ການສ້າງ ແລະ ທຳລາຍສິ່ງເສດເຫຼືອ;

3. **ສັນຍາປາຣີ** ໝາຍເຖິງ ສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ ທີ່ໄດ້ຖືກຮັບຮອງ ໃນກອງປະຊຸມລັດພາຄີສົນທິສັນຍາ ຄັ້ງທີ 21 ຂອງສົນທິສັນຍາສະຫະປະຊາຊາດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC);

4. **ເວຣາ (Verra)** ໝາຍເຖິງ ມາດຕະຖານສາກົນໃນການຢັ້ງຢືນສິນເຊື່ອກາກບອນ ຈາກປະລິມານການຫຼຸດຜ່ອນທາດອາຍເຮືອນແກ້ວ ຊຶ່ງຖືກນຳໃຊ້ສຳລັບຕະຫຼາດກາກບອນແບບສະໝັກໃຈ;

5. **ໂກນສະແຕນດາດ (Gold Standard)** ໝາຍເຖິງ ມາດຕະຖານສາກົນໃນການຢັ້ງຢືນສິນເຊື່ອກາກບອນ ຈາກປະລິມານການຫຼຸດຜ່ອນການປ່ອຍ, ການດູດຊັບ ແລະ ການເກັບກັກ ທາດອາຍເຮືອນແກ້ວ ຊຶ່ງຖືກນຳໃຊ້ສຳລັບຕະຫຼາດກາກບອນແບບສະໝັກໃຈ ໂດຍເນັ້ນໃສ່ການເຊື່ອມໂຍງເປົ້າໝາຍການພັດທະນາແບບຍືນຍົງເຂົ້າໃນ ຂະບວນການຢັ້ງຢືນການຫຼຸດຜ່ອນທາດອາຍເຮືອນແກ້ວ ຂອງໂຄງການຊື້ ຂາຍ ສິນເຊື່ອກາກບອນ;

6. **ອາກທຣີ (ART- TREES)** ໝາຍເຖິງ ມາດຕະຖານ ການກຳນົດປະລິມານ, ການຕິດຕາມ, ການລາຍງານ ແລະ ການຢັ້ງຢືນການຫຼຸດຜ່ອນການປ່ອຍ, ການດູດຊັບ ແລະ ການເກັບກັກ ທາດອາຍເຮືອນແກ້ວ ຂອງສາກົນໃນການຢັ້ງຢືນສິນເຊື່ອກາກບອນ ສຳລັບໂຄງການຫຼຸດຜ່ອນທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ;

7. **ສົນທິສັນຍາຣາມຊາ (Ramsar Convention)** ໝາຍເຖິງ ສົນທິສັນຍາ ກ່ຽວກັບພື້ນທີ່ດິນບໍລິເວນນ້ຳ ທີ່ມີຄວາມສຳຄັນລະດັບສາກົນ ທີ່ກຳນົດກອບໜ້າວຽກ;

8. **ພະລັງງານທົດແທນ ຫຼື ພະລັງງານທາງເລືອກ** ໝາຍເຖິງ ພະລັງງານທີ່ຜະລິດມາຈາກແຫຼ່ງພະລັງງານຕ່າງໆ ເຊັ່ນ ແສງຕາເວັນ, ລົມ, ໄຟຟ້ານ້ຳຕົກ, ຊີວະມວນ, ແກັສຊີວະມວນ, ພືດນ້ຳມັນ, ຄວາມຮ້ອນໃຕ້ດິນ, ສິ່ງເສດເຫຼືອ ແລະ ແຫຼ່ງພະລັງງານອື່ນ ທີ່ເປັນພະລັງງານສະອາດ ແລະ ສີຂຽວ ເພື່ອຜະລິດ ສຳລັບການຕອບສະໜອງຄວາມຕ້ອງການພະລັງງານຂອງສັງຄົມ;

9. **ການດູດຊັບທາດອາຍເຮືອນແກ້ວ** ໝາຍເຖິງ ການດູດຊຶມຊັບ ແລະ ການເກັບກັກ ທາດອາຍກາກບອນ ຊຶ່ງຕົ້ນໄມ້, ພືດ ຈະດູດຊຶມຊັບເອົາທາດອາຍກາກບອນໄວ້ ແລະ ປ່ອຍອົກຊີເຈັນອອກມາໂດຍຜ່ານຂະບວນການ ສັງເຄາະແສງຂອງຕົ້ນໄມ້ ແລະ ພືດ, ນອກຈາກນັ້ນ ຍັງສາມາດເກັບກັກທາດອາຍກາກບອນໄວ້ຢູ່ໃນພາກສ່ວນຕ່າງໆ ຂອງພວກມັນໃນຮູບຊີວະມວນສານ;

10. **ການເກັບກັກທາດອາຍເຮືອນແກ້ວ** ໝາຍເຖິງ ການເກັບກັກ ຫຼື ການສະສົມທາດອາຍເຮືອນແກ້ວ ຈາກກິດຈະການ ທີ່ກໍ່ໃຫ້ເກີດທາດອາຍດັ່ງກ່າວ ບໍ່ໃຫ້ຂຶ້ນສູ່ຊັ້ນບັນຍາກາດ;

11. **ຫົວໜ່ວຍທຽບເທົ່າເປັນໂຕນກາກບອນໄດອອກໄຊ ($tCO_{2e}$)** ໝາຍເຖິງ ຫົວໜ່ວຍມາດຕະຖານ ທີ່ຖືກນຳໃຊ້ເພື່ອທຽບເທົ່າປະລິມານການປ່ອຍທາດອາຍເຮືອນແກ້ວ ຈຳນວນ ເຈັດ ທາດອາຍ ທີ່ກຳນົດໃນອະນຸສັນຍາກຽວໂຕວ່າດ້ວຍການຄວບຄຸມການປ່ອຍທາດອາຍເຮືອນແກ້ວ;

12. **ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ** ໝາຍເຖິງ ແຜນງານແຫ່ງຊາດ ທີ່ໄດ້ກຳນົດຄາດໝາຍສູ້ຊົນໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ປັບຕົວເຂົ້າກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ຂອງ ສປປ ລາວ ທີ່ກຳນົດອອກໃນແຕ່ລະໄລຍະ ຊຶ່ງຈະໄດ້ມີການປັບປຸງທຸກ ຫ້າປີ;

13. **ພະລັງງານສະອາດ** ໝາຍເຖິງ ພະລັງງານທີ່ເປັນມິດກັບສິ່ງແວດລ້ອມ, ພະລັງງານສີຂຽວ ທີ່ຜະລິດຈາກແຫຼ່ງພະລັງງານທົດແທນ ແລະ ພະລັງງານທາງເລືອກໃໝ່ ເປັນຕົ້ນ ພະລັງງານ ນ້ຳ, ແສງຕາເວັນ, ລົມ, ຊີວະມວນ, ເຊວເຊື້ອໄຟ (ໄຮໂດຣເຈນ), ນ້ຳມັນເຊື້ອໄຟຊີວະພາບ;

14. **ໜ່ວຍງານເອກະລາດ** ໝາຍເຖິງ ໜ່ວຍງານທີ່ມີຄວາມຊ່ຽວຊານ ກ່ຽວກັບການຄິດໄລ່ ແລະ ການຢັ້ງຢືນປະລິມານການຫຼຸດຜ່ອນການປ່ອຍ, ການດູດຊຶບ ແລະ ການເກັບກັກ ທາດອາຍເຮືອນແກ້ວ ຊຶ່ງເປັນທີ່ຍອມຮັບ ແລະ ຢັ້ງຢືນຈາກສາກົນ;

15. **ການຊົດເຊີຍທາດອາຍກາກບອນ (Carbon Offset)** ໝາຍເຖິງ ການທົດແທນປະລິມານການປ່ອຍທາດອາຍເຮືອນແກ້ວ ຈາກໂຄງການ ແລະ ກິດຈະການຕ່າງໆ ທີ່ມີການປ່ອຍທາດອາຍເຮືອນແກ້ວສູ່ຊັ້ນບັນຍາກາດ ໂດຍການສ້າງເປັນກິດຈະກຳຫຼຸດຜ່ອນການປ່ອຍ, ການດູດຊຶບ ແລະ ການເກັບກັກທາດອາຍເຮືອນແກ້ວ ເປັນຕົ້ນ ກິດຈະການໃນຂົງເຂດ ກະສິກຳ ແລະ ປ່າໄມ້, ພະລັງງານ ແລະ ການອະນຸລັກພະລັງງານ, ອຸດສາຫະກຳ, ໂຄງລ່າງພື້ນຖານ, ຂົນສົ່ງ ແລະ ສິ່ງເສດເຫຼືອ, ອະນຸລັກພື້ນທີ່ດິນບໍລິເວນນ້ຳ ເພື່ອຊົດເຊີຍການປ່ອຍທາດອາຍເຮືອນແກ້ວ ຊຶ່ງແຕ່ລະທາດ ຕ້ອງໄດ້ຄິດໄລ່ເປັນຫົວໜ່ວຍທຽບເທົ່າເປັນໂຕນກາກບອນໄດອອກໄຊ ($tCO_{2e}$);

16. **ການບໍລິການໃຫ້ຄຳປຶກສາ** ໝາຍເຖິງ ການໃຫ້ບໍລິການ ກ່ຽວກັບການສ້າງຕັ້ງ, ການສຶກສາ, ສຳຫຼວດ, ອອກແບບ, ວິເຄາະ, ປະເມີນ, ຄິດໄລ່ປະລິມານການຫຼຸດຜ່ອນການປ່ອຍ, ດູດຊຶບ ແລະ ການເກັບກັກທາດອາຍເຮືອນແກ້ວ, ບົດວິພາກເສດຖະກິດ-ເຕັກນິກ ກ່ຽວກັບໂຄງການສິນເຊື່ອກາກບອນ.

### ມາດຕາ 4 ຫຼັກການກ່ຽວກັບວຽກງານສິນເຊື່ອກາກບອນ

ວຽກງານສິນເຊື່ອກາກບອນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນຍຸດທະສາດສິນເຊື່ອກາກບອນ, ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ, ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ປົກປ້ອງຜົນປະໂຫຍດຂອງ ລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການເຄື່ອນໄຫວກິດຈະການສິນເຊື່ອກາກບອນ;
4. ການມີສ່ວນຮ່ວມຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
5. ຮັບປະກັນການປະສານສົມທົບກັບຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

### ມາດຕາ 5 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານສິນເຊື່ອກາກບອນ ຢູ່ ສປປ ລາວ.

## ໝວດທີ 2
## ແຜນຍຸດທະສາດສິນເຊື່ອກາກບອນ

**ມາດຕາ 6 ແຜນຍຸດທະສາດສິນເຊື່ອກາກບອນ**

ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ເປັນຜູ້ຄົ້ນຄວ້າ ສ້າງແຜນຍຸດທະສາດສິນເຊື່ອກາກບອນ ຊຶ່ງແມ່ນ ນະໂຍບາຍ ກ່ຽວກັບ ການຮ່ວມມື ຫຼື ຊື້ ຂາຍ ສິນເຊື່ອກາກບອນ ແລະ ການກໍານົດຄາດໝາຍສູ້ຊົນລະຫວ່າງການຫຼຸດຜ່ອນການປ່ອຍ, ການດູດຊັບ ແລະ ການເກັບກັກ ທາດອາຍເຮືອນແກ້ວ ໃນແຕ່ລະໄລຍະ ໂດຍມີການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເພື່ອສະເໜີລັດຖະບານ ພິຈາລະນາຮັບຮອງ.

**ມາດຕາ 7 ເນື້ອໃນແຜນຍຸດທະສາດສິນເຊື່ອກາກບອນ**

ເນື້ອໃນແຜນຍຸດທະສາດສິນເຊື່ອກາກບອນ ມີ ດັ່ງນີ້:

1. ສະພາບລວມໃນການຄຸ້ມຄອງ ກ່ຽວກັບສິນເຊື່ອກາກບອນ ໃນແຕ່ລະໄລຍະ;
2. ເປົ້າໝາຍ ແລະ ຄາດໝາຍລວມ ຂອງແຜນຍຸດທະສາດ;
3. ບັນດາວຽກຈຸດສຸມກ່ຽວກັບສິນເຊື່ອກາກບອນ;
4. ນະໂຍບາຍ, ກົນໄກ ແລະ ມາດຕະການ ການຈັດຕັ້ງປະຕິບັດວຽກງານສິນເຊື່ອກາກບອນ;
5. ບັນດາແຜນງານ, ໂຄງການ ແລະ ກິດຈະກໍາ ກ່ຽວກັບສິນເຊື່ອກາກບອນ;
6. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈໍາເປັນ.

## ໝວດທີ 3
## ກິດຈະການສິນເຊື່ອກາກບອນ

**ມາດຕາ 8 ກິດຈະການສິນເຊື່ອກາກບອນ**

ກິດຈະການສິນເຊື່ອກາກບອນ ມີ ດັ່ງນີ້:

1. ກິດຈະການໃນຂົງເຂດກະສິກໍາ ແລະ ປ່າໄມ້;
2. ກິດຈະການໃນຂົງເຂດພະລັງງານ ແລະ ອະນຸລັກພະລັງງານ;
3. ກິດຈະການໃນຂົງເຂດອຸດສາຫະກໍາ;
4. ກິດຈະການໃນຂົງເຂດພັດທະນາໂຄງລ່າງພື້ນຖານ, ຂົນສົ່ງ ແລະ ສິ່ງເສດເຫຼືອ;
5. ກິດຈະການໃນຂົງເຂດອະນຸລັກ ທີ່ດິນບໍລິເວນນໍ້າ ແລະ ດິນຖ່ານຕົມ;
6. ກິດຈະການໃນຂົງເຂດອື່ນ ທີ່ກ່ຽວຂ້ອງ.

ການດໍາເນີນກິດຈະການສິນເຊື່ອກາກບອນ ໃນແຕ່ລະຂົງເຂດ ຕ້ອງສອດຄ່ອງກັບມາດຕະຖານຫຼຸດຜ່ອນ ທາດອາຍເຮືອນແກ້ວ.

**ມາດຕາ 9 ກິດຈະການໃນຂົງເຂດກະສິກໍາ ແລະ ປ່າໄມ້**

ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ເປັນຜູ້ຄຸ້ມຄອງກິດຈະການສິນເຊື່ອກາກບອນໃນຂົງເຂດກະສິກໍາ ແລະ ປ່າໄມ້ ໂດຍປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າສ້າງລະບຽບການ ກ່ຽວກັບການຄຸ້ມຄອງກິດຈະການ, ກໍານົດພື້ນທີ່ກິດຈະການ, ຄັດເລືອກ ຊະນິດ ຫຼື ແນວພັນໄມ້, ແນວພັນພືດ, ການລ້ຽງສັດ ແລະ ມາດຕະຖານເຕັກນິກ-ເຕັກໂນໂລຊີ ສໍາລັບກິດຈະການ ເປັນຕົ້ນ ການປູກໄມ້ ຫຼື ຟື້ນຟູປ່າ,

ການຫຼຸດຜ່ອນ ການຕັດໄມ້ທຳລາຍປ່າ ແລະ ການເຮັດໃຫ້ປ່າຊຸດໂຊມ, ການ ອະນຸລັກປ່າໄມ້, ປູກຝັງ, ລ້ຽງສັດ ເພື່ອສົ່ງເສີມການຊື້ ຂາຍ ສິນເຊື່ອກາກບອນ, ແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ.

**ມາດຕາ 10 ກິດຈະການໃນຂົງເຂດພະລັງງານ ແລະ ອະນຸລັກພະລັງງານ**

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄຸ້ມຄອງກິດຈະການສິນເຊື່ອກາກບອນໃນຂົງເຂດພະລັງງານ ແລະ ອະນຸລັກພະລັງງານ ໂດຍປະສານສົມທົບກັບ ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າສ້າງລະບຽບການ ກ່ຽວກັບການຄຸ້ມຄອງກິດຈະການ, ກຳນົດ ພື້ນທີ່ກິດຈະການ, ປະເພດພະລັງງານທົດແທນ ຫຼື ພະລັງງານທາງເລືອກ, ພະລັງງານສະອາດ ແລະ ມາດຕະຖານເຕັກນິກ-ເຕັກໂນໂລຊີ ສຳລັບກິດຈະການ ເປັນຕົ້ນ ພະລັງງານໄຟຟ້າ ແສງຕາເວັນ, ລົມ, ນ້ຳຕົກ, ນ້ຳຕົກແບບສູບກັບ, ເກັບຮັກສາພະລັງງານ, ປະສົມພະລັງງານ ແລະ ພະລັງງານໄຮໂດຣເຈັນ-ແອມໂມເນຍ ສີຂຽວ, ພະລັງງານຄວາມຮ້ອນໃຕ້ດິນ, ນ້ຳມັນເຊື້ອໄຟຊີວະພາບ, ພະລັງງານຊີວະມວນ, ແກັສຊີວະພາບ, ການປະຢັດພະລັງງານ, ການນຳໃຊ້ພະລັງງານຢ່າງມີປະສິດທິພາບ, ພະລັງງານສະອາດສຳລັບການປຸງແຕ່ງອາຫານ ແລະ ການຫັນປ່ຽນພະລັງງານ ໄປສູ່ພະລັງງານສະອາດ ໃນອຸດສາຫະກຳ ແລະ ການຂົນສົ່ງ ເພື່ອສົ່ງເສີມການຊື້ ຂາຍ ສິນເຊື່ອກາກບອນ, ແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ.

**ມາດຕາ 11 ກິດຈະການໃນຂົງເຂດອຸດສາຫະກຳ**

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄຸ້ມຄອງກິດຈະການສິນເຊື່ອກາກບອນ ໃນຂົງເຂດອຸດສາຫະກຳ ໂດຍປະສານສົມທົບກັບ ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າສ້າງລະບຽບການ ກ່ຽວກັບການຄຸ້ມຄອງກິດຈະການ, ກຳນົດ ພື້ນທີ່ຂອງກິດຈະການ, ການນຳໃຊ້ເຕັກໂນໂລຊີ ເພື່ອຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ເປັນມິດກັບສິ່ງແວດລ້ອມ ແລະ ກຳນົດມາດຕະຖານເຕັກນິກ-ເຕັກໂນໂລຊີ ສຳລັບກິດຈະການ ເປັນຕົ້ນ ອຸດສາຫະກຳສີຂຽວ, ໂຮງງານປຸງແຕ່ງ, ເຂດອຸດສາຫະກຳ, ນິຄົມອຸດສາຫະກຳ ເພື່ອສົ່ງເສີມການຊື້ ຂາຍ ສິນເຊື່ອກາກບອນ, ແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ.

**ມາດຕາ 12 ກິດຈະການໃນຂົງເຂດ ພັດທະນາໂຄງລ່າງພື້ນຖານ, ຂົນສົ່ງ ແລະ ສິ່ງເສດເຫຼືອ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄຸ້ມຄອງກິດຈະການສິນເຊື່ອກາກບອນ ໃນຂົງເຂດພັດທະນາໂຄງລ່າງພື້ນຖານ, ຂົນສົ່ງ ແລະ ສິ່ງເສດເຫຼືອ ໂດຍປະສານສົມທົບກັບ ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ສ້າງ ລະບຽບການ ກ່ຽວກັບການຄຸ້ມຄອງກິດຈະການ, ກຳນົດພື້ນທີ່ຂອງກິດຈະການ, ພາຫະນະທີ່ນຳໃຊ້ພະລັງງານສະອາດ, ການພັດທະນາໂຄງລ່າງພື້ນຖານ ແລະ ມາດຕະຖານເຕັກນິກ-ເຕັກໂນໂລຊີ ສຳລັບກິດຈະການ ເປັນຕົ້ນ ພາຫະນະບໍ່ນຳໃຊ້ນ້ຳມັນເຊື້ອໄຟ, ການພັດທະນາຕົວເມືອງສີຂຽວ, ການຈຳກັດ ແລະ ກຳຈັດສິ່ງເສດເຫຼືອ, ການຫັນປ່ຽນຈາກສິ່ງເສດເຫຼືອເປັນພະລັງງານ ແລະ ເປັນຜະລິດຕະພັນອື່ນ ເພື່ອສົ່ງເສີມການຊື້ ຂາຍ ສິນເຊື່ອກາກບອນ, ແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ.

ສຳລັບ ກິດຈະການໃນຂົງເຂດສິ່ງເສດເຫຼືອ ທີ່ບໍ່ໄດ້ຢູ່ໃນຄວາມຮັບຜິດຊອບຂອງກະຊວງໂຍທາທິການ ແລະ ຂົນສົ່ງ ມອບໃຫ້ກະຊວງຄຸ້ມຄອງສິ່ງເສດເຫຼືອນັ້ນ ເປັນຜູ້ຄຸ້ມຄອງກິດຈະການດັ່ງກ່າວ.

**ມາດຕາ 13 ກິດຈະການໃນຂົງເຂດອະນຸລັກ ທີ່ດິນບໍລິເວນນ້ຳ ແລະ ດິນຖ່ານຕົມ**

ກະຊວງທີ່ຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະປະເພດ ທີ່ມີທີ່ດິນບໍລິເວນນ້ຳ ເປັນຜູ້ຄຸ້ມຄອງກິດຈະການໃນຂົງເຂດອະນຸລັກ ທີ່ດິນບໍລິເວນນ້ຳ ໂດຍປະສານສົມທົບກັບ ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຮັກສາລະບົບນິເວດ ແລະ ຊີວະນາναພັນ ໃນການຄົ້ນຄວ້າສ້າງລະບຽບການ ກ່ຽວກັບການຄຸ້ມຄອງກິດຈະການ, ກຳນົດ ພື້ນທີ່ຂອງກິດຈະການ ແລະ ມາດຕະຖານເຕັກນິກ-ເຕັກໂນໂລຊີ ສຳລັບກິດຈະການ ເພື່ອສົ່ງເສີມການຊື້ ຂາຍ ສິນເຊື່ອກາກບອນ, ແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຄຸ້ມຄອງກິດຈະການສິນເຊື່ອກາກບອນ ໃນຂົງເຂດການອະນຸລັກ ທີ່ດິນບໍລິເວນນ້ຳ ຕາມສົນທິສັນຍາຣາມຊາ ແລະ ດິນຖ່ານຕົມ ເພື່ອຮັກສາລະບົບນິເວດ ແລະ ຊີວະນານາພັນ ໂດຍປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າສ້າງລະບຽບການກ່ຽວກັບການຄຸ້ມຄອງກິດຈະການ, ກຳນົດ ພື້ນທີ່ຂອງກິດຈະການ ແລະ ມາດຕະຖານເຕັກນິກ-ເຕັກໂນໂລຊີ ສຳລັບກິດຈະການ ເພື່ອສົ່ງເສີມການຊື້ ຂາຍ ສິນເຊື່ອກາກບອນ, ແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ.

## ໝວດທີ 4
## ການດຳເນີນໂຄງການສິນເຊື່ອກາກບອນ

### ມາດຕາ 14 ການດຳເນີນໂຄງການສິນເຊື່ອກາກບອນ

ການດຳເນີນໂຄງການສິນເຊື່ອກາກບອນ ແມ່ນ ການເຄື່ອນໄຫວດຳເນີນກິດຈະການສິນເຊື່ອກາກບອນ ເພື່ອຮ່ວມມື ແລະ ຊື້ ຂາຍ ສິນເຊື່ອກາກບອນ.

### ມາດຕາ 15 ການຂໍອະນຸຍາດດຳເນີນໂຄງການສິນເຊື່ອກາກບອນ

ຜູ້ທີ່ມີຈຸດປະສົງດຳເນີນໂຄງການສິນເຊື່ອກາກບອນ ເພື່ອຊື້ ຂາຍ ສິນເຊື່ອກາກບອນ ຕ້ອງຂໍຂຶ້ນທະບຽນວິສາຫະກິດ ຫຼື ແຈ້ງເພີ່ມກິດຈະການເຂົ້າໃນໃບທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ແລ້ວຂໍອະນຸຍາດດຳເນີນໂຄງການສິນເຊື່ອກາກບອນ ຈາກກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແຕ່ມາດຕາ 9 ຫາ 13 ຕາມແຕ່ລະກໍລະນີ.

ສຳລັບການດຳເນີນໂຄງການສິນເຊື່ອກາກບອນ ທີ່ເປັນການຮ່ວມມື ສອງຝ່າຍ ຫຼື ຫຼາຍຝ່າຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງດຳລັດສະບັບນີ້ ໃຫ້ປະຕິບັດຕາມສັນຍາການຮ່ວມມື ທີ່ໄດ້ຕົກລົງກັນ ແລະ ຍັງຕ້ອງໄດ້ຂໍອະນຸຍາດດຳເນີນໂຄງການຈາກລັດຖະບານ.

### ມາດຕາ 16 ເງື່ອນໄຂຂໍອະນຸຍາດດຳເນີນໂຄງການສິນເຊື່ອກາກບອນ

ການຂໍອະນຸຍາດດຳເນີນໂຄງການສິນເຊື່ອກາກບອນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຂໍ້ມູນກ່ຽວກັບກິດຈະກຳການຫຼຸດຜ່ອນການປ່ອຍ, ການດູດຊັບ ຫຼື ການເກັບກັກ ທາດອາຍເຮືອນແກ້ວ;
2. ມີຈຸດທີ່ຕັ້ງ, ເຂດແດນ, ພື້ນທີ່ ຂອງໂຄງການ ທີ່ດຳເນີນກິດຈະກຳ ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ;
3. ກຳນົດມາດຕະຖານ ທີ່ຈະນຳໃຊ້ເຂົ້າໃນການຫຼຸດຜ່ອນທາດອາຍເຮືອນແກ້ວ ເປັນຕົ້ນ ເວຣາ (Verra), ໂກນສະແຕນດາດ (Gold Standard), ອາກທຣີ (ART- TREES);
4. ມີເປົ້າໝາຍເຂົ້າຮ່ວມກິດຈະກຳ ໃນຈຸດທີ່ຕັ້ງ ຫຼື ພື້ນທີ່ໂຄງການຫຼຸດຜ່ອນການປ່ອຍ, ການດູດຊັບ ຫຼື ການເກັບກັກ ທາດອາຍເຮືອນແກ້ວ ໃນຈຳນວນທີ່ເໝາະສົມ ເຊັ່ນ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຕາແສງ, ບ້ານ, ເຈົ້າຂອງໂຄງການ ແລະ ຜູ້ມີສ່ວນຮ່ວມອື່ນ;
5. ຄາດຄະເນການຫຼຸດຜ່ອນການປ່ອຍ, ການດູດຊັບ ຫຼື ການເກັບກັກ ທາດອາຍເຮືອນແກ້ວ;
6. ມີຂໍ້ມູນກ່ຽວກັບ ກຳມະສິດຕໍ່ຊັບສິນ ຫຼື ສິດນຳໃຊ້ທີ່ດິນ ຢູ່ໃນຂອບເຂດ, ພື້ນທີ່ໂຄງການ ລວມທັງ ຂໍ້ມູນກ່ຽວກັບການເຊົ່າ ຫຼື ການສຳປະທານທີ່ດິນ ແລະ ເອກະສານອະນຸຍາດອື່ນ ທີ່ກ່ຽວຂ້ອງ ເປັນຕົ້ນ ຂໍ້ມູນກ່ຽວກັບ ຜູ້ມີສິດນຳໃຊ້ທີ່ດິນແຕ່ລະຕອນ, ເຈົ້າຂອງ ຕົ້ນໄມ້, ສິ່ງປຸກສ້າງ, ພາຫະນະ ແລະ ກຳມະສິດຕໍ່ຊັບສິນອື່ນ ຂອງຜູ້ເຂົ້າຮ່ວມໂຄງການ ໂດຍມີເອກະສານຢັ້ງຢືນຢ່າງຖືກຕ້ອງ ລວມທັງບົດບັນທຶກກອງປະຊຸມທີ່ກ່ຽວຂ້ອງ ໂດຍການມີສ່ວນຮ່ວມ ແລະ ການເຫັນດີ ຂອງປະຊາຊົນ ທີ່ອາໄສຢູ່ເຂດໂຄງການ;

7. ມີການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

8. ມີຂໍ້ມູນກ່ຽວກັບ ການແບ່ງປັນຜົນປະໂຫຍດ ລະຫວ່າງ ລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

9. ກຳນົດຈຸດປະສົງກ່ຽວກັບ ຮູບແບບການຮ່ວມມື ຫຼື ການຊື້ ຂາຍ ສິນເຊື່ອກາກບອນ ເປັນຕົ້ນ ຮູບແບບການຊື້ ຂາຍ ສິນເຊື່ອກາກບອນແບບສະໝັກໃຈ, ການຊື້ ຂາຍ ສິນເຊື່ອກາກບອນແບບບັງຄັບ.

**ມາດຕາ 17 ເອກະສານປະກອບ ຂໍອະນຸຍາດດຳເນີນໂຄງການສິນເຊື່ອກາກບອນ**

ເອກະສານປະກອບ ຂໍອະນຸຍາດດຳເນີນໂຄງການສິນເຊື່ອກາກບອນ ມີ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ ທີ່ກຳນົດໄວ້;
2. ບົດວິພາກເສດຖະກິດ-ເຕັກນິກ;
3. ສຳເນົາໃບທະບຽນວິສາຫະກິດ;
4. ປະຫວັດການດຳເນີນທຸລະກິດ ຖ້າມີ;
5. ໃບຢັ້ງຢືນຖານະທາງດ້ານການເງິນຂອງບໍລິສັດ;
6. ເອກະສານກ່ຽວກັບ ຈຸດທີ່ຕັ້ງ, ກຳມະສິດຕໍ່ຊັບສິນ ຫຼື ສິດນຳໃຊ້ທີ່ດິນ ຢູ່ໃນຂອບເຂດ, ພື້ນທີ່ໂຄງການ ລວມທັງສັນຍາ ສຳປະທານ ຫຼື ເຊົ່າ ທີ່ດິນ ຖ້າມີ;
7. ເອກະສານອື່ນ ທີ່ຈຳເປັນ ແລະ ກ່ຽວຂ້ອງ.

**ມາດຕາ 18 ການພິຈາລະນາອະນຸຍາດດຳເນີນໂຄງການສິນເຊື່ອກາກບອນ**

ກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ ພິຈາລະນາອະນຸຍາດດຳເນີນໂຄງການສິນເຊື່ອກາກບອນ ຕາມຂັ້ນຕອນ ດັ່ງນີ້:

1. ຮັບ ແລະ ກວດກາ ຄຳຮ້ອງ, ເອກະສານປະກອບ ຂໍອະນຸຍາດດຳເນີນໂຄງການ, ໃນກໍລະນີເຫັນວ່າ ເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃຫ້ແຈ້ງຜູ້ຮ້ອງຂໍເປັນລາຍລັກອັກສອນ ພ້ອມທັງເຫດຜົນ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ;

2. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອລົງກວດກາພື້ນທີ່ໂຄງການ, ຈັດກອງປະຊຸມປຶກສາຫາລື ແລະ ອອກໃບອະນຸຍາດດຳເນີນໂຄງການ ພາຍໃນເວລາ ຊາວຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

ພາຍຫຼັງທີ່ໄດ້ຮັບອະນຸຍາດໃຫ້ດຳເນີນໂຄງການແລ້ວ ໃຫ້ເຈົ້າຂອງໂຄງການ ຂໍຂຶ້ນທະບຽນນຳກະຊວງກະສິກຳ ແລະ ສິ່ງແວດລ້ອມ ພາຍໃນເວລາ ຫົກສິບວັນ ນັບແຕ່ວັນໄດ້ຮັບອະນຸຍາດດຳເນີນໂຄງການ ເປັນຕົ້ນໄປ.

**ມາດຕາ 19 ເອກະສານປະກອບ ຂໍຂຶ້ນທະບຽນໂຄງການສິນເຊື່ອກາກບອນ**

ເອກະສານປະກອບ ຂໍຂຶ້ນທະບຽນໂຄງການສິນເຊື່ອກາກບອນ ມີ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ ທີ່ກຳນົດໄວ້;
2. ສຳເນົາໃບອະນຸຍາດດຳເນີນໂຄງການສິນເຊື່ອກາກບອນ;
3. ສຳເນົາໃບທະບຽນວິສາຫະກິດ;
4. ສຳເນົາບົດວິພາກເສດຖະກິດ-ເຕັກນິກ;
5. ເອກະສານຢັ້ງຢືນກ່ຽວກັບ ຈຸດທີ່ຕັ້ງ, ເຂດແດນ, ພື້ນທີ່ ຂອງໂຄງການ ລວມທັງສັນຍາ ສຳປະທານ ຫຼື ເຊົ່າ ທີ່ດິນ ຖ້າມີ;
6. ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຖ້າມີ;
7. ເອກະສານອື່ນ ທີ່ຈຳເປັນ ແລະ ກ່ຽວຂ້ອງ.

**ມາດຕາ 20 ການພິຈາລະນາຂຶ້ນທະບຽນໂຄງການສິນເຊື່ອກາກບອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາຂຶ້ນທະບຽນໂຄງການສິນເຊື່ອກາກບອນ ຕາມຂັ້ນຕອນດັ່ງນີ້:

1. ຮັບ ແລະ ກວດກາ ຄຳຮ້ອງ, ເອກະສານປະກອບ ຂໍຂຶ້ນທະບຽນໂຄງການ, ໃນກໍລະນີເຫັນວ່າເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃຫ້ແຈ້ງຜູ້ຮ້ອງຂໍເປັນລາຍລັກອັກສອນ ພ້ອມທັງເຫດຜົນ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ;

2. ປະສານສົມທົບກັບ ກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອກວດກາພື້ນທີ່ໂຄງການ, ຈັດກອງປະຊຸມປຶກສາຫາລື ແລະ ອອກໃບທະບຽນໂຄງການ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

**ມາດຕາ 21 ໃບທະບຽນໂຄງການສິນເຊື່ອກາກບອນ**

ໃບທະບຽນໂຄງການສິນເຊື່ອກາກບອນ ແມ່ນ ເອກະສານຢັ້ງຢືນສິດຂອງເຈົ້າຂອງໂຄງການສິນເຊື່ອກາກບອນ. ໃບທະບຽນໂຄງການສິນເຊື່ອກາກບອນ ມີອາຍຸການນຳໃຊ້ຕະຫຼອດໄລຍະໂຄງການ ຫຼື ຕາມການຕົກລົງໃນສັນຍາ.

## ໝວດທີ 5
## ການຄິດໄລ່ ແລະ ການຮັບຮອງ ປະລິມານ ການຫຼຸດຜ່ອນການປ່ອຍ, ການດູດຊັບ ແລະ ການເກັບກັກ ທາດອາຍເຮືອນແກ້ວ

**ມາດຕາ 22 ການຄິດໄລ່ປະລິມານ ການຫຼຸດຜ່ອນການປ່ອຍ, ການດູດຊັບ ແລະ ການເກັບກັກ ທາດອາຍເຮືອນແກ້ວ**

ເຈົ້າຂອງໂຄງການ ຕ້ອງວ່າຈ້າງໜ່ວຍງານເອກະລາດ ຄິດໄລ່ ແລະ ຢັ້ງຢືນ ປະລິມານ ການຫຼຸດຜ່ອນການປ່ອຍ, ການດູດຊັບ ແລະ ການເກັບກັກ ທາດອາຍເຮືອນແກ້ວ ຕາມມາດຕະຖານການຫຼຸດຜ່ອນທາດອາຍເຮືອນແກ້ວ.

ເຈົ້າຂອງໂຄງການ ຕ້ອງປະສານສົມທົບກັບ ກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ ກວດກາການຄິດໄລ່ ແລະ ການຢັ້ງຢືນ ຂອງໜ່ວຍງານເອກະລາດ ເພື່ອຄວາມເປັນເອກະພາບ ແລ້ວໃຫ້ກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ ນຳສະເໜີກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາ ສຳລັບໂຄງການຮ່ວມມື, ສ່ວນໂຄງການຊື້ ຂາຍ ສິນເຊື່ອກາກບອນ ໃຫ້ເຈົ້າຂອງໂຄງການ ເປັນຜູ້ນຳສະເໜີ.

**ມາດຕາ 23 ການຮັບຮອງປະລິມານ ການຫຼຸດຜ່ອນການປ່ອຍ, ການດູດຊັບ ແລະ ການເກັບກັກ ທາດອາຍເຮືອນແກ້ວ**

ພາຍຫຼັງທີ່ໄດ້ຮັບໜັງສືສະເໜີ ຈາກກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ ຫຼື ເຈົ້າຂອງໂຄງການສິນເຊື່ອກາກບອນ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາຮັບຮອງ ປະລິມານ ການຫຼຸດຜ່ອນການປ່ອຍ, ການດູດຊັບ ແລະ ການເກັບກັກ ທາດອາຍເຮືອນແກ້ວ ພາຍໃນເວລາ ຊາວວັນ ນັບແຕ່ວັນໄດ້ຮັບໜັງສືສະເໜີເປັນຕົ້ນໄປ ແລ້ວສະເໜີຕໍ່ລັດຖະບານ ພິຈາລະນາອະນຸຍາດໃຫ້ຊື້ ຂາຍ ສິນເຊື່ອກາກບອນ.

## ໝວດທີ 6
## ການຮ່ວມມື ແລະ ການຊື້ ຂາຍ ສິນເຊື່ອກາກບອນ

**ມາດຕາ 24 ການຮ່ວມມືກ່ຽວກັບສິນເຊື່ອກາກບອນ**

ລັດຖະບານ ແຫ່ງ ສປປ ລາວ ຮ່ວມມືກັບ ຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ ເພື່ອ ພັດທະນາເປັນກິດຈະການຫຼຸດຜ່ອນທາດອາຍເຮືອນແກ້ວ, ແລກປ່ຽນສິນເຊື່ອກາກບອນ ຫຼື ຊົດເຊີຍທາດອາຍກາກບອນ ຕາມທີ່

ໄດ້ຕົກລົງກັນ ໃນສັນຍາ ສອງຝ່າຍ ຫຼື ຫຼາຍຝ່າຍ.

ສິນເຊື່ອກາກບອນທີ່ໄດ້ຈາກການຮ່ວມມື ທັງໝົດ ຈະຖືກຫັກໄວ້ເປັນກຳມະສິດ ຂອງ ສປປ ລາວ ຢ່າງໜ້ອຍ ສິບ ສ່ວນຮ້ອຍ ຂອງປະລິມານສິນເຊື່ອກາກບອນ ທັງໝົດ, ສ່ວນທີ່ຍັງເຫຼືອນັ້ນ ຈະເປັນກຳມະສິດຂອງຄູ່ສັນຍາ ແລະ ຈະ ບໍ່ຖືກນັບເຂົ້າໃນຈຳນວນການຫຼຸດຜ່ອນທາດອາຍເຮືອນແກ້ວ ຂອງ ສປປ ລາວ.

ໃນກໍລະນີ ຄູ່ສັນຍາ ມີເຈດຈຳນົງພັດທະນາກິດຈະການສິນເຊື່ອກາກບອນ ແຕ່ບໍ່ມີຈຸດປະສົງຖືກຳມະສິດໃນ ສິນເຊື່ອກາກບອນ ຈຳນວນປະລິມານສິນເຊື່ອກາກບອນນັ້ນ ກໍຈະຖືກນັບເຂົ້າໃນການຫຼຸດຜ່ອນທາດອາຍເຮືອນແກ້ວ ຂອງ ສປປ ລາວ.

**ມາດຕາ 25 ການຊື້ ຂາຍ ສິນເຊື່ອກາກບອນ**

ການຊື້ ຂາຍ ສິນເຊື່ອກາກບອນ ແມ່ນ ການຕົກລົງກັນ ລະຫວ່າງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງ ພາຍໃນ ແລະ ຕ່າງປະເທດ ກັບເຈົ້າຂອງໂຄງການສິນເຊື່ອກາກບອນ ທີ່ມີສິນເຊື່ອກາກບອນ ໂດຍຄິດໄລ່ເປັນຫົວໜ່ວຍ ທຽບເທົ່າເປັນໂຕນກາກບອນໄດອອກໄຊ ($tCO_{2e}$) ເພື່ອທົດແທນການປ່ອຍທາດອາຍເຮືອນແກ້ວ ສຳລັບຜູ້ຊື້ທີ່ເປັນ ຜູ້ປ່ອຍທາດອາຍເຮືອນແກ້ວ ຫຼື ເພື່ອຂາຍຕໍ່ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ພາຍຫຼັງມີການຊື້ ຂາຍ ສິນເຊື່ອກາກບອນ ເຈົ້າຂອງໂຄງການສິນເຊື່ອກາກບອນ ຕ້ອງແຈ້ງຈົດທະບຽນການ ຊື້ ຂາຍ ສິນເຊື່ອກາກບອນ ນຳກະຊວງກະສິກຳ ແລະ ສິ່ງແວດລ້ອມ ພາຍໃນເວລາ ສິບວັນ ລັດຖະການ.

ການຊື້ ຂາຍ ສິນເຊື່ອກາກບອນ ຕ້ອງດຳເນີນຜ່ານລະບົບທະນາຄານທຸລະກິດໃດໜຶ່ງ ຫຼື ທະນາຄານແຫ່ງ ສປປ ລາວ ແລະ ການໂອນເງິນເຂົ້າອອກລະຫວ່າງປະເທດ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ຂອງທະນາຄານ ແຫ່ງ ສປປ ລາວ.

**ມາດຕາ 26 ຮູບແບບການຊື້ ຂາຍ ສິນເຊື່ອກາກບອນ**

ຮູບແບບການຊື້ ຂາຍ ສິນເຊື່ອກາກບອນ ມີ ດັ່ງນີ້:

1. ການຊື້ ຂາຍ ສິນເຊື່ອກາກບອນແບບບັງຄັບ;
2. ການຊື້ ຂາຍ ສິນເຊື່ອກາກບອນແບບສະໝັກໃຈ.

**ມາດຕາ 27 ການຊື້ ຂາຍ ສິນເຊື່ອກາກບອນແບບບັງຄັບ**

ການຊື້ ຂາຍ ສິນເຊື່ອກາກບອນແບບບັງຄັບ ແມ່ນ ການຊື້ ຂາຍ ສິນເຊື່ອກາກບອນ ໂດຍຜ່ານຕະຫຼາດສິນເຊື່ອ ກາກບອນ ຊຶ່ງຕ້ອງໄດ້ປະຕິບັດຕາມ ເງື່ອນໄຂ, ລະບຽບການ ຂອງຕະຫຼາດສິນເຊື່ອກາກບອນ ແລະ ພັນທະການ ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ.

**ມາດຕາ 28 ການຊື້ ຂາຍ ສິນເຊື່ອກາກບອນແບບສະໝັກໃຈ**

ການຊື້ ຂາຍ ສິນເຊື່ອກາກບອນແບບສະໝັກໃຈ ແມ່ນ ການຊື້ ຂາຍ ສິນເຊື່ອກາກບອນ ໂດຍກົງ ແຕ່ຕ້ອງ ປະຕິບັດຕາມມາດຕະຖານການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຂອງສາກົນ.

**ມາດຕາ 29 ເງື່ອນໄຂຂອງການຊື້ ຂາຍ ສິນເຊື່ອກາກບອນ**

ເງື່ອນໄຂຂອງການຊື້ ຂາຍ ສິນເຊື່ອກາກບອນ ມີ ດັ່ງນີ້:

1. ຂຶ້ນທະບຽນໂຄງການສິນເຊື່ອກາກບອນ;
2. ໄດ້ຮັບການຢັ້ງຢືນຈາກໜ່ວຍງານເອກະລາດ;
3. ໄດ້ຮັບການຮັບຮອງປະລິມານການຫຼຸດຜ່ອນການປ່ອຍ, ການດູດຊັບ ແລະ ການເກັບກັກ ທາດອາຍ ເຮືອນແກ້ວ;

4. ໄດ້ຮັບການອະນຸຍາດຊື້ ຂາຍ ສິນເຊື່ອກາກບອນ;

5. ມີອັດຕາສ່ວນການແບ່ງປັນຜົນປະໂຫຍດ ຈາກການຊື້ ຂາຍ ສິນເຊື່ອກາກບອນ ເປັນຕົ້ນ ລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ຜູ້ມີສ່ວນຮ່ວມອື່ນ.

## ໝວດທີ 7
## ການແບ່ງປັນຜົນປະໂຫຍດ, ພັນທະອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບສິນເຊື່ອກາກບອນ

### ມາດຕາ 30 ການແບ່ງປັນຜົນປະໂຫຍດກ່ຽວກັບສິນເຊື່ອກາກບອນ

ການແບ່ງປັນຜົນປະໂຫຍດກ່ຽວກັບສິນເຊື່ອກາກບອນ ແມ່ນ ການແບ່ງປັນລາຍໄດ້ຈາກໂຄງການສິນເຊື່ອກາກບອນ ລະຫວ່າງ ລັດ, ເຈົ້າຂອງໂຄງການ ຫຼື ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນສະມາຊິກ ຫຼື ຜູ້ເຂົ້າຮ່ວມໂຄງການ. ການແບ່ງປັນດັ່ງກ່າວ ຕ້ອງລະບຸແຈ້ງໃນບົດວິພາກເສດຖະກິດ-ເຕັກນິກ ແລະ ສັນຍາພັດທະນາໂຄງການ ໃນເວລາຂຶ້ນທະບຽນໂຄງການສິນເຊື່ອກາກບອນ.

ການແບ່ງປັນຜົນປະໂຫຍດລະຫວ່າງ ເຈົ້າຂອງໂຄງການ ກັບ ລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນສະມາຊິກ ຫຼື ຜູ້ເຂົ້າຮ່ວມໂຄງການ ໃຫ້ປະຕິບັດຕາມການຕົກລົງກັນໃນສັນຍາແບ່ງປັນຜົນປະໂຫຍດ.

### ມາດຕາ 31 ພັນທະອາກອນກ່ຽວກັບສິນເຊື່ອກາກບອນ

ພັນທະອາກອນກ່ຽວກັບສິນເຊື່ອກາກບອນ ແມ່ນ ພັນທະເປັນເງິນ ທີ່ເກັບຈາກການດຳເນີນໂຄງການສິນເຊື່ອກາກບອນ ເປັນຕົ້ນ ອາກອນມູນຄ່າເພີ່ມ, ອາກອນລາຍໄດ້, ພັນທະອາກອນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 32 ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບສິນເຊື່ອກາກບອນ

ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບສິນເຊື່ອກາກບອນ ໃຫ້ປະຕິບັດຕາມລະບຽບການກ່ຽວກັບ ຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ ໃນແຕ່ລະໄລຍະ.

## ໝວດທີ 8
## ການກວດກາດ້ານວິຊາການໂຄງການສິນເຊື່ອກາກບອນ

### ມາດຕາ 33 ການກວດກາດ້ານວິຊາການໂຄງການສິນເຊື່ອກາກບອນ

ການກວດກາວິຊາການ ແມ່ນ ການດຳເນີນການຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຂອງໂຄງການສິນເຊື່ອກາກບອນ ເປັນຕົ້ນ ການປະຕິບັດເງື່ອນໄຂຂອງໂຄງການສິນເຊື່ອກາກບອນ, ການແບ່ງປັນຜົນປະໂຫຍດ ທີ່ໄດ້ຮັບຈາກສິນເຊື່ອກາກບອນ, ການປະຕິບັດພັນທະຕ່າງໆ.

ການກວດກາວິຊາການໂຄງການສິນເຊື່ອກາກບອນ ປະກອບມີ:

1. ການກວດກາທາງດ້ານວິຊາການ ຂອງເຈົ້າຂອງໂຄງການ;
2. ການກວດກາທາງດ້ານວິຊາການ ຂອງຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;
3. ການກວດກາທາງດ້ານວິຊາການ ຂອງຂະແໜງການທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ.

**ມາດຕາ 34 ການກວດກາດ້ານວິຊາການ ຂອງເຈົ້າຂອງໂຄງການ**

ເຈົ້າຂອງໂຄງການສິນເຊື່ອກາກບອນ ແມ່ນ ພາກສ່ວນທຳອິດ ທີ່ດຳເນີນການຕິດຕາມ ກວດກາ ດ້ວຍຕົນເອງ ຢ່າງເປັນປະຈຳ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານຂອງໂຄງການສິນເຊື່ອກາກບອນ ໃຫ້ມີປະສິດທິຜົນ ແລະ ຕ້ອງລາຍງານຜົນການຕິດຕາມ ກວດກາ ໃຫ້ແກ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ.

**ມາດຕາ 35 ການກວດກາທາງດ້ານວິຊາການ ຂອງຂະແໜງການກະສິກຳ ແລະ ສິ່ງແວດລ້ອມ**

ການກວດກາທາງດ້ານວິຊາການ ຂອງຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ແມ່ນ ພາກສ່ວນທີ່ຕິດຕາມ ກວດກາ ການຈັດຕັ້ງປະຕິບັດໂຄງການສິນເຊື່ອກາກບອນ ໂດຍສົມທົບກັບ ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນຕົ້ນ ການປະຕິບັດເງື່ອນໄຂທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ເວລາຂໍຂຶ້ນທະບຽນໂຄງການສິນເຊື່ອກາກບອນ, ການແບ່ງປັນຜົນປະໂຫຍດ ທີ່ໄດ້ຮັບຈາກການຊື້ ຂາຍ ສິນເຊື່ອກາກບອນ, ການປະຕິບັດພັນທະຕ່າງໆ ທີ່ດຳເນີນການຕິດຕາມ ກວດກາ ໂຄງການສິນເຊື່ອກາກບອນ ໂດຍແບ່ງຄວາມຮັບຜິດຊອບດັ່ງນີ້:

1. ກະຊວງກະສິກຳ ແລະ ສິ່ງແວດລ້ອມ ລົງຕິດຕາມ ກວດກາ ໂຄງການສິນເຊື່ອກາກບອນ ໜຶ່ງ ຄັ້ງຕໍ່ປີ. ໃນກໍລະນີຈຳເປັນສາມາດເພີ່ມ ຈຳນວນຄັ້ງໃນການລົງຕິດຕາມ ກວດກາໄດ້ ພ້ອມທັງໃຫ້ຄຳແນະນຳ, ແຈ້ງເຕືອນ ແລະ ນຳໃຊ້ມາດຕະການຕ່າງໆ ໃນກໍລະນີມີການລະເມີດກົດໝາຍ ແລະ ລະບຽບການ ແລ້ວລາຍງານຜົນການຕິດຕາມ ກວດກາໃຫ້ລັດຖະບານ ເປັນແຕ່ລະໄລຍະ;

2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ລົງຕິດຕາມ ກວດກາ ໂຄງການສິນເຊື່ອກາກບອນ ສອງຄັ້ງຕໍ່ປີ. ໃນກໍລະນີຈຳເປັນສາມາດເພີ່ມ ຫຼື ຫຼຸດຈຳນວນຄັ້ງ ໃນການລົງຕິດຕາມ ກວດກາໄດ້ ພ້ອມທັງໃຫ້ຄຳແນະນຳ, ແຈ້ງເຕືອນ ແລະ ນຳໃຊ້ມາດຕະການຕ່າງໆ ໃນກໍລະນີມີການລະເມີດກົດໝາຍ ແລະ ລະບຽບການ ແລ້ວລາຍງານຜົນການຕິດຕາມ ກວດກາ ໃຫ້ອົງການປົກຄອງຂັ້ນແຂວງ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນແຕ່ລະໄລຍະ.

ການຕິດຕາມ ກວດກາດ້ານວິຊາການໂຄງການສິນເຊື່ອກາກບອນ ໃຫ້ນຳໃຊ້ງົບປະມານການຕິດຕາມ ກວດກາວິຊາການດ້ານສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ.

**ມາດຕາ 36 ການກວດກາທາງດ້ານວິຊາການ ຂອງຂະແໜງການທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ**

ການກວດກາທາງດ້ານວິຊາການ ຂອງຂະແໜງການທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ ແມ່ນ ພາກສ່ວນຕິດຕາມ ກວດກາ ການຈັດຕັ້ງປະຕິບັດໂຄງການສິນເຊື່ອກາກບອນ ໂດຍປະສານສົມທົບກັບ ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ເປັນຕົ້ນ ການນຳໃຊ້ເຕັກນິກ, ເຕັກໂນໂລຊີ ໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ, ການຄິດໄລ່ປະລິມານການຫຼຸດຜ່ອນການປ່ອຍ, ການດູດຊັບ ແລະ ການເກັບກັກ ທາດອາຍເຮືອນແກ້ວ ໃຫ້ສອດຄ່ອງກັບມາດຕະຖານການຫຼຸດຜ່ອນທາດອາຍເຮືອນແກ້ວ.

## ໝວດທີ 9

## ການໂຈະ, ການຖອນ, ການປ່ຽນແປງ ແລະ ການສິ້ນສຸດ ໂຄງການສິນເຊື່ອກາກບອນ

**ມາດຕາ 37 ການໂຈະການເຄື່ອນໄຫວໂຄງການສິນເຊື່ອກາກບອນ**

ໂຄງການສິນເຊື່ອກາກບອນ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສິນເຊື່ອກາກບອນ ທີ່ບໍ່ສົ່ງຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ;

2. ບໍ່ປະຕິບັດຕາມເງື່ອນໄຂຕາມບົດວິພາກເສດຖະກິດ-ເຕັກນິກ ທີ່ໄດ້ກໍານົດໄວ້ໃນໃບຢັ້ງຢືນໂຄງການສິນເຊື່ອກາກບອນ;

3. ບໍ່ປະຕິບັດພັນທະດ້ານການເງິນ, ການແບ່ງປັນຜົນປະໂຫຍດ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;

4. ຖືກໂຈະໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ;

5. ປິດບັງ, ເຊື່ອງອໍາ ແລະ ໃຫ້ຂໍ້ມູນກ່ຽວກັບໂຄງການສິນເຊື່ອກາກບອນ ທີ່ບໍ່ຖືກຕ້ອງ ແລະ ສອດຄ່ອງກັບຄວາມເປັນຈິງ;

6. ບໍ່ປະຕິບັດການແກ້ໄຂບັນຫາທີ່ພົບເຫັນ ໃນເວລາກວດກາທາງດ້ານວິຊາການໂຄງການສິນເຊື່ອກາກບອນ ພາຍຫຼັງທີ່ໄດ້ຮັບໜັງສືແຈ້ງເຕືອນ ຈາກກະຊວງກະສິກໍາ ແລະ ສິ່ງແວດລ້ອມ.

ການໂຈະການເຄື່ອນໄຫວຂອງໂຄງການສິນເຊື່ອກາກບອນ ຕ້ອງມີກໍານົດເວລາອັນແນ່ນອນ ເພື່ອໃຫ້ເຈົ້າຂອງໂຄງການປັບປຸງ ແລະ ແກ້ໄຂ.

ພາຍຫຼັງທີ່ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ໄດ້ໂຈະການເຄື່ອນໄຫວຂອງໂຄງການສິນເຊື່ອກາກບອນແລ້ວ ຕ້ອງແຈ້ງກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ ໂຈະການເຄື່ອນໄຫວກິດຈະການ.

### ມາດຕາ 38 ການຖອນໃບທະບຽນໂຄງການສິນເຊື່ອກາກບອນ

ໂຄງການສິນເຊື່ອກາກບອນ ຈະຖືກຖອນໃບທະບຽນໂຄງການສິນເຊື່ອກາກບອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ປັບປຸງ ແລະ ແກ້ໄຂ ຕາມການແຈ້ງໂຈະ ທີ່ໄດ້ກໍານົດໄວ້ໃນມາດຕາ 37 ຂອງດໍາລັດສະບັບນີ້;
2. ບໍ່ດໍາເນີນກິດຈະການ ພາຍໃນກໍານົດ ສອງປີ ນັບແຕ່ວັນໄດ້ຮັບອະນຸຍາດເປັນຕົ້ນໄປ;
3. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບສິນເຊື່ອກາກບອນ ທີ່ສ້າງຜົນກະທົບຢ່າງຮ້າຍແຮງຕໍ່ສິ່ງແວດລ້ອມ.

ພາຍຫຼັງທີ່ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ໄດ້ຖອນໃບທະບຽນໂຄງການສິນເຊື່ອກາກບອນແລ້ວ ຕ້ອງແຈ້ງກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ ຢຸດຕິການດໍາເນີນກິດຈະການດັ່ງກ່າວ.

### ມາດຕາ 39 ການປ່ຽນແປງໂຄງການສິນເຊື່ອກາກບອນ

ການປ່ຽນແປງໂຄງການສິນເຊື່ອກາກບອນ ແມ່ນ ການເພີ່ມ ຫຼື ຫຼຸດ ກິດຈະການຫຼຸດຜ່ອນທາດອາຍເຮືອນແກ້ວ, ການປ່ຽນຜູ້ຖືຮຸ້ນ ຫຼື ການປ່ຽນແປງໃດໜຶ່ງ ຊຶ່ງຕ້ອງສະເໜີຕໍ່ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາ.

### ມາດຕາ 40 ການສິ້ນສຸດໂຄງການສິນເຊື່ອກາກບອນ

ໂຄງການສິນເຊື່ອກາກບອນ ຈະສິ້ນສຸດໃນກໍລະນີໃດໜຶ່ງ ດັ່ງນີ້:

1. ເຈົ້າຂອງໂຄງການສິນເຊື່ອກາກບອນ ຂໍຍົກເລີກ ດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບການເຫັນດີຈາກກະຊວງກະສິກໍາ ແລະ ສິ່ງແວດລ້ອມ;
2. ສິ້ນສຸດອາຍຸ ຂອງໂຄງການ ຕາມບົດວິພາກເສດຖະກິດ-ເຕັກນິກ ຫຼື ສັນຍາກ່ຽວກັບສິນເຊື່ອກາກບອນ;
3. ມີຄໍາຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ຫຼື ຕາມການຕົກລົງຂອງລັດຖະບານ.

## ໝວດທີ 10
## ສິດ ແລະ ພັນທະ ຂອງເຈົ້າຂອງໂຄງການສິນເຊື່ອກາກບອນ

### ມາດຕາ 41 ສິດ ຂອງເຈົ້າຂອງໂຄງການສິນເຊື່ອກາກບອນ

ເຈົ້າຂອງໂຄງການສິນເຊື່ອກາກບອນ ມີສິດ ດັ່ງນີ້:

1. ເປັນເຈົ້າກຳມະສິດ ຕໍ່ສິນເຊື່ອກາກບອນ ໃນຂອບເຂດໂຄງການຂອງຕົນ;

2. ມອບ ໂອນ, ຂາຍ ກຳມະສິດສິນເຊື່ອກາກບອນ ໃນຂອບເຂດອາຍຸຂອງໂຄງການ ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

3. ຄໍ້າປະກັນການກູ້ຢືມ, ຕີມູນຄ່າເປັນຮຸ້ນ ຕາມອາຍຸຂອງໂຄງການທີ່ຍັງເຫຼືອນຳ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ຫຼື ຕ່າງປະເທດ;

4. ໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ;

5. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສິນເຊື່ອກາກບອນ;

6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 42 ພັນທະ ຂອງເຈົ້າຂອງໂຄງການສິນເຊື່ອກາກບອນ

ເຈົ້າຂອງໂຄງການສິນເຊື່ອກາກບອນ ມີພັນທະ ດັ່ງນີ້:

1. ປົກປັກຮັກສາຊັບພະຍາກອນທຳມະຊາດ ເພື່ອເປົ້າໝາຍການຫຼຸດຜ່ອນການປ່ອຍ, ການດູດຊັບ ແລະ ການເກັບກັກ ທາດອາຍເຮືອນແກ້ວ;

2. ເກັບຮັກສາຂໍ້ມູນທາງດ້ານເຕັກນິກ ກ່ຽວກັບສິນເຊື່ອກາກບອນ ເປັນຕົ້ນ ຂໍ້ມູນທາງດ້ານພື້ນທີ່, ວິທີການຄິດໄລ່ປະລິມານອັດຕາການຫຼຸດຜ່ອນການປ່ອຍ, ການດູດຊັບ, ການເກັບກັກ ທາດອາຍເຮືອນແກ້ວ ທີ່ຕົນເລືອກ;

3. ປ້ອງກັນບໍ່ໃຫ້ເກີດຜົນກະທົບທາງລົບຕໍ່ສິ່ງແວດລ້ອມ;

4. ປະຕິບັດຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນສັນຍາການຮ່ວມມື ແລະ ສັນຍາການຊື້ ຂາຍ ສິນເຊື່ອກາກບອນ;

5. ເສຍ ຄ່າທຳນຽມ, ຄ່າບໍລິການ ແລະ ປະຕິບັດພັນທະອາກອນ ຕາມກົດໝາຍ;

6. ສະຫຼຸບ ແລະ ລາຍງານ ກ່ຽວກັບໂຄງການສິນເຊື່ອກາກບອນ ຕໍ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຢ່າງເປັນປົກກະຕິ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 11
## ການມີສ່ວນຮ່ວມຂອງສັງຄົມ

### ມາດຕາ 43 ການມີສ່ວນຮ່ວມຂອງສັງຄົມ

ການມີສ່ວນຮ່ວມຂອງສັງຄົມ ແມ່ນ ຂະບວນການ ປຶກສາຫາລື, ສະໜອງຂໍ້ມູນ ຂ່າວສານ ແລະ ຮັບຄຳເຫັນຂອງທຸກພາກສ່ວນໃນສັງຄົມ ກ່ຽວກັບວຽກງານສິນເຊື່ອກາກບອນ ລວມທັງການມີສ່ວນຮ່ວມ ໃນການຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເພື່ອໃຫ້ມີ ຄວາມໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ, ຂະແໜງການທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ ແລະ ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບຮ່ວມ ແລະ ສ້າງເງື່ອນໄຂໃຫ້ທຸກພາກສ່ວນໃນສັງຄົມ ມີສ່ວນຮ່ວມໃນວຽກງານສິນເຊື່ອກາກບອນ.

ເຈົ້າຂອງໂຄງການ ຕ້ອງສ້າງເງື່ອນໄຂໃຫ້ທຸກພາກສ່ວນໃນສັງຄົມ ໂດຍສະເພາະ ເພດຍິງ, ຜູ້ທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ແລະ ຜູ້ດ້ອຍໂອກາດ ທີ່ໄດ້ຮັບຜົນກະທົບຈາກໂຄງການ ມີສ່ວນຮ່ວມໃນການດຳເນີນໂຄງການ ໃນແຕ່ລະໄລຍະ.

**ມາດຕາ 44 ການປູກຈິດສຳນຶກ**

ການປູກຈິດສຳນຶກ ແມ່ນ ການໂຄສະນາເຜີຍແຜ່ ໃຫ້ສັງຄົມເຂົ້າໃຈ ແລະ ເຫັນໄດ້ຄວາມໝາຍ ແລະ ຄວາມສຳຄັນ ຂອງວຽກງານສິນເຊື່ອກາກບອນ ໃນຂອບເຂດທົ່ວປະເທດ ໂດຍຜ່ານສື່ມວນຊົນ, ກຳນົດເຂົ້າໃນຫຼັກສູດການຮຽນ-ການສອນ, ຊຸກຍູ້ ແລະ ສົ່ງເສີມ ການສ້າງກິດຈະກຳກ່ຽວກັບສິນເຊື່ອກາກບອນ.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການຮັບຜິດຊອບໂດຍກົງ ໃນການປູກຈິດສຳນຶກ ໃຫ້ແກ່ສັງຄົມ ໂດຍມີການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

## ໝວດທີ 12

## ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສິນເຊື່ອກາກບອນ

**ມາດຕາ 45 ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສິນເຊື່ອກາກບອນ**

ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສິນເຊື່ອກາກບອນ ແມ່ນ ບ່ອນເກັບກຳ ເອກະສານ, ຕົວເລກ, ສະຖິຕິ ແລະ ຂໍ້ມູນອື່ນ ກ່ຽວກັບສິນເຊື່ອກາກບອນ ໃນຮູບແບບ ເຈ້ຍ ແລະ ເອເລັກໂຕຣນິກ ທີ່ນຳໃຊ້ເຕັກໂນໂລຊີທັນສະໄໝ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານສິນເຊື່ອກາກບອນ ໃຫ້ມີຄຸນນະພາບ, ມີຄວາມສະດວກ, ວ່ອງໄວ ແລະ ຊັດເຈນ.

**ມາດຕາ 46 ການສ້າງ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສິນເຊື່ອກາກບອນ**

ກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ ຮັບຜິດຊອບ ສ້າງ, ປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ຖານຂໍ້ມູນ ຂ່າວສານ ກ່ຽວກັບສິນເຊື່ອກາກບອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍເຊື່ອມຕໍ່ກັບລະບົບຂໍ້ມູນ ຂ່າວສານ ກ່ຽວກັບສິນເຊື່ອກາກບອນ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ໂດຍມີການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ພະແນກການທີ່ກ່ຽວຂ້ອງ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ, ຫ້ອງການທີ່ກ່ຽວຂ້ອງ ຂັ້ນເມືອງ ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານ ດັ່ງກ່າວ ລວມທັງການສະໜອງຂໍ້ມູນ ກ່ຽວກັບສິນເຊື່ອກາກບອນ ໃນຄວາມຮັບຜິດຊອບຂອງຕົນ ໃຫ້ແກ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 47 ການເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນ ຂ່າວສານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນ ຂ່າວສານ ກ່ຽວກັບສິນເຊື່ອກາກບອນໃນລະບົບຂໍ້ມູນ ຂ່າວສານ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ.

ສຳລັບການນຳໃຊ້ຂໍ້ມູນ ກ່ຽວກັບສິນເຊື່ອກາກບອນ ທີ່ເປັນອັບສະເພາະ ຕ້ອງໄດ້ຮັບອະນຸຍາດຈາກ ອົງການຄຸ້ມຄອງ ແລະ ກວດກາ ວຽກງານສິນເຊື່ອກາກບອນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 13
## ທຸລະກິດກ່ຽວກັບສິນເຊື່ອກາກບອນ

**ມາດຕາ 48 ການດຳເນີນທຸລະກິດກ່ຽວກັບສິນເຊື່ອກາກບອນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບສິນເຊື່ອກາກບອນ ຕ້ອງຂໍຂຶ້ນທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ພາຍຫຼັງໄດ້ໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດ ນຳກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ກະຊວງຄຸ້ມຄອງກິດຈະການສິນເຊື່ອກາກບອນ ຕາມແຕ່ລະປະເພດທຸລະກິດກ່ຽວກັບສິນເຊື່ອກາກບອນ.

**ມາດຕາ 49 ປະເພດທຸລະກິດກ່ຽວກັບສິນເຊື່ອກາກບອນ**

ປະເພດທຸລະກິດກ່ຽວກັບສິນເຊື່ອກາກບອນ ມີ ດັ່ງນີ້:

1. ຊື້ ຂາຍ ສິນເຊື່ອກາກບອນ;
2. ຕະຫຼາດຊື້ ຂາຍ ສິນເຊື່ອກາກບອນ;
3. ບໍລິການໃຫ້ຄຳປຶກສາ ກ່ຽວກັບສິນເຊື່ອກາກບອນ.

ການຊື້ ຂາຍ ສິນເຊື່ອກາກບອນ ແມ່ນປະເພດທຸລະກິດ ທີ່ຢູ່ໃນຄວາມຮັບຜິດຊອບຂອງກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ, ສ່ວນຕະຫຼາດຊື້ ຂາຍ ສິນເຊື່ອກາກບອນ ແລະ ການບໍລິການໃຫ້ຄຳປຶກສາກ່ຽວກັບສິນເຊື່ອກາກບອນ ແມ່ນປະເພດທຸລະກິດ ທີ່ຢູ່ໃນຄວາມຮັບຜິດຊອບຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ.

ສຳລັບລາຍລະອຽດກ່ຽວກັບການດຳເນີນທຸລະກິດກ່ຽວກັບສິນເຊື່ອກາກບອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 14
## ຂໍ້ຫ້າມ

**ມາດຕາ 50 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ດຳເນີນກິດຈະການສິນເຊື່ອກາກບອນ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສ້າງອຸປະສັກ, ຂັດຂວາງ, ໃຊ້ຄວາມຮຸນແຮງ, ບັງຄັບ ນາບຂູ່, ໝິ່ນປະໝາດ ການເຄື່ອນໄຫວການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ປິດບັງ, ຊຸກເຊື່ອງ ຫຼື ໃຫ້ຂໍ້ມູນ ກ່ຽວກັບສິນເຊື່ອກາກບອນ ບໍ່ຖືກຕ້ອງຕາມຄວາມເປັນຈິງ;
4. ເປັນສື່ກາງໃນການ ໃຫ້ ຫຼື ຮັບ ສິນບົນ;
5. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບວຽກງານສິນເຊື່ອກາກບອນ;
6. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມ ການຈັດຕັ້ງ, ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 51 ຂໍ້ຫ້າມສຳລັບເຈົ້າຂອງໂຄງການ**

ຫ້າມ ເຈົ້າຂອງໂຄງການສິນເຊື່ອກາກບອນ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ລວມທັງການສະໜອງຂໍ້ມູນ ຂ່າວສານ ກ່ຽວກັບສິນເຊື່ອກາກບອນ ບໍ່ຖືກຕ້ອງຕາມຄວາມເປັນຈິງ;

2. ນຳໃຊ້ໃບທະບຽນໂຄງການສິນເຊື່ອກາກບອນ ບໍ່ຖືກຕ້ອງຕາມກົດໝາຍ;

3. ຫັນໂຄງການສິນເຊື່ອກາກບອນ ໄປດຳເນີນກິດຈະການອື່ນ;

4. ດຳເນີນໂຄງການສິນເຊື່ອກາກບອນ ທີ່ສ້າງຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ;

5. ໃຫ້, ຮັບ ຫຼື ເປັນສື່ກາງ ໃນການໃຫ້ ຫຼື ຮັບ ສິນບົນ ແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

6. ປະຕິເສດຄວາມຮັບຜິດຊອບ, ບໍ່ໃຫ້ການຮ່ວມມື ຫຼື ຂັດຂວາງ ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງວຽກງານສິນເຊື່ອກາກບອນ;

7. ໂຄສະນາ ຊວນເຊື່ອ ແລະ ແອບອ້າງ ກ່ຽວກັບສິນເຊື່ອກາກບອນ ເກີນຄວາມເປັນຈິງ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 52 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດ ສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ ຂອງຕົນ;

2. ຂໍເອົາ, ທວງເອົາ ຫຼື ຮັບ, ເປັນສື່ກາງ ໃນການໃຫ້ ຫຼື ຮັບ ສິນບົນ;

3. ເປັນນາຍໜ້າ, ທີ່ປຶກສາໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ກ່ຽວກັບສິນເຊື່ອກາກບອນ;

4. ອອກ ໃບອະນຸຍາດດຳເນີນກິດຈະການ, ໃບທະບຽນໂຄງການ ແລະ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບສິນເຊື່ອກາກບອນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

5. ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານ, ອອກເອກະສານ ຫຼື ທຳລາຍເອກະສານ ໂດຍບໍ່ຖືກຕ້ອງ;

6. ເປີດເຜີຍຂໍ້ມູນກ່ຽວກັບສິນເຊື່ອກາກບອນ ທີ່ເປັນຄວາມລັບ ໂດຍບໍ່ໄດ້ຮັບອະນຸຍາດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 15
## ການຄຸ້ມຄອງ ແລະ ກວດກາ ວຽກງານສິນເຊື່ອກາກບອນ

**ມາດຕາ 53 ການຄຸ້ມຄອງ ແລະ ກວດກາ ວຽກງານສິນເຊື່ອກາກບອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ ເປັນຜູ້ຄຸ້ມຄອງ ແລະ ກວດກາ ວຽກງານສິນເຊື່ອກາກບອນ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານສິນເຊື່ອກາກບອນ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ສິ່ງແວດລ້ອມ;

2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ;

3. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ;

4. ຄະນະກຳມະການປົກຄອງຕາແສງ;

5. ກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ, ພະແນກ ຂັ້ນແຂວງ, ຫ້ອງການ ຂັ້ນເມືອງ, ຄະນະກຳມະການປົກຄອງຕາແສງ ທີ່ກ່ຽວຂ້ອງ.

**ມາດຕາ 54 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານສິນເຊື່ອກາກບອນ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສິນເຊື່ອກາກບອນ ເພື່ອນຳສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສິນເຊື່ອກາກບອນ ເປັນແຜນງານ, ແຜນການ ແລະ ໂຄງການ ຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສິນເຊື່ອກາກບອນ;

4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສິນເຊື່ອກາກບອນ;

5. ສະເໜີລັດຖະບານ ພິຈາລະນາອະນຸຍາດການຊື້ ຂາຍ ສິນເຊື່ອກາກບອນ;

6. ອອກໃບອະນຸຍາດເຄື່ອນໄຫວກິດຈະການ, ໃບທະບຽນໂຄງການ ສິນເຊື່ອກາກບອນ ແລະ ອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບສິນເຊື່ອກາກບອນ ລວມທັງຢັ້ງຢືນການ ມອບ, ໂອນ ໃບທະບຽນໂຄງການສິນເຊື່ອກາກບອນ, ໂຈະ ການເຄື່ອນໄຫວກິດຈະການສິນເຊື່ອກາກບອນ, ຖອນໃບທະບຽນໂຄງການສິນເຊື່ອກາກບອນ;

7. ຈົດທະບຽນການຊື້ ຂາຍ ສິນເຊື່ອກາກບອນ;

8. ຊີ້ນຳ, ຊຸກຍູ້, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານສິນເຊື່ອກາກບອນ;

9. ເກັບກຳ ຂໍ້ມູນ, ສ້າງ, ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສິນເຊື່ອກາກບອນ;

10. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄາລະກອນ ກ່ຽວກັບວຽກງານສິນເຊື່ອກາກບອນ;

11. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສິນເຊື່ອກາກບອນ;

12. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສິນເຊື່ອກາກບອນ;

13. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສິນເຊື່ອກາກບອນ;

14. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສິນເຊື່ອກາກບອນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 55 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານສິນເຊື່ອກາກບອນ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານສິນເຊື່ອກາກບອນ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສິນເຊື່ອກາກບອນ;

3. ຊຸກຍູ້, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານສິນເຊື່ອກາກບອນ;

4. ເຂົ້າຮ່ວມ ການເກັບກຳ ຂໍ້ມູນ ແລະ ຄຸ້ມຄອງລະບົບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສິນເຊື່ອກາກບອນ;

5. ສະເໜີ ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄາລະກອນ ກ່ຽວກັບວຽກງານສິນເຊື່ອກາກບອນ;

6. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສິນເຊື່ອກາກບອນ;

7. ປະສານສົມທົບກັບພະແນກ, ອົງການອື່ນ ຂັ້ນແຂວງ, ຄະນະກຳມະການປົກຄອງຂັ້ນເມືອງ, ຄະນະກຳມະການປົກຄອງຕາແສງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສິນເຊື່ອກາກບອນ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສິນເຊື່ອກາກບອນ ຕໍ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ຄະນະກຳມະການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 56 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານສິນເຊື່ອກາກບອນ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານສິນເຊື່ອກາກບອນ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສິນເຊື່ອກາກບອນ;

3. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານສິນເຊື່ອກາກບອນ;

4. ເຂົ້າຮ່ວມ ການເກັບກຳ ຂໍ້ມູນ ແລະ ຄຸ້ມຄອງລະບົບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສິນເຊື່ອກາກບອນ;

5. ສະເໜີ ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄາລະກອນ ກ່ຽວກັບວຽກງານສິນເຊື່ອກາກບອນ;

6. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສິນເຊື່ອກາກບອນ;

7. ປະສານສົມທົບກັບຫ້ອງການ, ອົງການອື່ນ ຂັ້ນເມືອງ, ຄະນະກຳມະການປົກຄອງຕາແສງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສິນເຊື່ອກາກບອນ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສິນເຊື່ອກາກບອນ ຕໍ່ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຄະນະກຳມະການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 57 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກຄອງຕາແສງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານສິນເຊື່ອກາກບອນ ຄະນະກຳມະການປົກຄອງຕາແສງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານສິນເຊື່ອກາກບອນ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສິນເຊື່ອກາກບອນ;

3. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານສິນເຊື່ອກາກບອນ;

4. ເຂົ້າຮ່ວມ ການເກັບກຳ ຂໍ້ມູນ ແລະ ຄຸ້ມຄອງລະບົບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສິນເຊື່ອກາກບອນ;

5. ແກ້ໄຂ ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສິນເຊື່ອກາກບອນ;

6. ປະສານສົມທົບກັບບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສິນເຊື່ອກາກບອນ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສິນເຊື່ອກາກບອນ ຕໍ່ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ຄະນະກຳມະການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 58 ສິດ ແລະ ໜ້າທີ່ ຂອງກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ, ພະແນກ ຂັ້ນແຂວງ, ຫ້ອງການ ຂັ້ນເມືອງ, ຄະນະກຳມະການປົກຄອງຕາແສງ ທີ່ກ່ຽວຂ້ອງ**

ກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ, ພະແນກ ຂັ້ນແຂວງ, ຫ້ອງການ ຂັ້ນເມືອງ, ຄະນະກຳມະການປົກຄອງຕາແສງ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 59 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບອົງການຄຸ້ມຄອງ ແລະ ກວດກາ ວຽກງານສິນເຊື່ອກາກບອນ ໃນການຄຸ້ມຄອງ ແລະ ກວດກາ ວຽກງານດັ່ງກ່າວ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 60 ເນື້ອໃນການກວດກາ**

ການກວດກາວຽກງານສິນເຊື່ອກາກບອນ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບສິນເຊື່ອກາກບອນ;
2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ການດຳເນີນໂຄງການ ແລະ ການດຳເນີນທຸລະກິດ ກ່ຽວກັບສິນເຊື່ອກາກບອນ;
4. ການປະຕິບັດ ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສິນເຊື່ອກາກບອນ;
5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 61 ຮູບການການກວດກາ**

ການກວດກາວຽກງານສິນເຊື່ອກາກບອນ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານສິນເຊື່ອກາກບອນ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 16
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 62 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 63 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 17
## ບົດບັນຍັດສຸດທ້າຍ

**ມາດຕາ 64 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກະຊວງທີ່ຄຸ້ມຄອງກິດຈະການສິນເຊື່ອກາກບອນ ເປັນເຈົ້າການ ຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 65 ການຂຶ້ນທະບຽນສຳລັບໂຄງການສິນເຊື່ອກາກບອນ ທີ່ບໍ່ທັນໄດ້ຂຶ້ນທະບຽນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ຂະແໜງການ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ກວດກາຄືນ ແລະ ແຈ້ງເປັນລາຍລັກອັກສອນໃຫ້ຜູ້ດຳເນີນ ກິດຈະການ ແລະ ໂຄງການ ສິນເຊື່ອກາກບອນ ກ່ອນດຳລັດສະບັບນີ້ ໃຫ້ປັບປຸງໂຄງການ ແລະ ຂໍຂຶ້ນທະບຽນໂຄງການສິນເຊື່ອກາກບອນ ໃຫ້ຖືກຕ້ອງຕາມດຳລັດສະບັບນີ້ ພາຍໃນ ໜຶ່ງຮ້ອຍແປດສິບວັນ ນັບແຕ່ວັນໄດ້ຮັບແຈ້ງການ ເປັນຕົ້ນໄປ.

**ມາດຕາ 66 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 01 ສິງຫາ 2025 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**